# ການສຳຫຼວດພົນລະເມືອງປີ 2020 ແລະ ການຮັກສາຄວາມລັບ

*ຄຳຕອບຂອງເຈົ້າ ສຳລັບ ການສຳຫຼວດພົນລະເມືອງປີ 2020 ແມ່ນຈະໄດ້ຮັບການປົກປ້ອງ ແລະ ປອດໄພ ພາຍໃຕ້ກົດໝາຍຂອງລັດຖະບານກາງ. ຄຳຕອບຂອງເຈົ້າ ຈະຖືກນຳໃຊ້ເພື່ອຜະລິດຂໍ້ມູນສະຖິຕິເທົ່ານັ້ນ—* ***ບໍ່ສາມາດນຳໃຊ້ເພື່ອຕໍ່ຕ້ານເຈົ້າໃນລັກສະ ນະໃດໜຶ່ງ****. ອີງໃສ່ກົດໝາຍ, ທຸກຄຳຕອບສຳລັບການສຳຫຼວດຄົວເຮືອນ ແລະ ທຸລະກິດ ຂອງສູນສຳຫຼວດພົນລະເມືອງຂອງສະຫະລັດເອມາລິການ ຈະຖືກເກັບຮັກສາເປັນຄວາມລັບ.*

## ຄຳຕອບສຳລັບການສຳຫຼວດພົນລະເມືອງ ປີ 2020 ເພື່ອກຳນົດອະນາຄົດ.

ຄຳຕອບສຳລັບການສຳຫຼວດພົນລະເມືອງ ຊ່ວຍຊຸມຊົນໃນການລະດົມທຶນທີ່ພວກເຂົາຕ້ອງການ ແລະ ຊ່ວຍໃຫ້ທຸລະກິດ ສາມາດຕັດສິນໃຈໂດຍອີງໃສ່ຂໍ້ມູນ ເຊິ່ງຈະຊ່ວຍຜັກດັນໃຫ້ເສດຖະກິດເຕີບໂຕ. ຂໍ້ມູນການສຳຫຼວດພົນລະເມືອງ ມີຜົນກະທົບຕໍ່ກັບຊີວິດປະຈຳວັນຂອງພວກເຮົາ, ຊ່ວຍໃນການຕັດສິນໃຈທີ່ສຳຄັນ ກ່ຽວກັບການຈັດສັນງົບປະມານສຳລັບການບໍລິການ ແລະ ໂຄງລ່າງ ຂອງຊຸມຊົນຂອງ ເຈົ້າ, ລວມທັງ ການບໍລິການສຸຂະພາບ, ສູນສຳລັບຜູ້ສູງອາຍຸ, ວຽກເຮັດງານທຳ, ຕົວແທນທາງການ ເມືອງ, ຫົນທາງ, ໂຮງຮຽນ, ແລະ ທຸລະກິດ. ງົບປະມານຂອງລັດຖະບານກາງຫຼາຍກວ່າ $675 ຕື້ ໄຫຼວຽນກັບສູ່ ບັນດາລັດ ແລະ ຊຸມຊົນທ້ອງຖິ່ນ ໃນແຕ່ລະປີ ເຊິ່ງອີງໃສ່ຂໍ້ມູນການສຳຫຼວດ ພົນລະເມືອງ.



## ຄຳຕອບຂອງເຈົ້າແມ່ນປອດໄພ ແລະ ເກັບຮັກສາຢ່າງປອດໄພ.

ພາຍໃຕ້ກົດໝາຍ ສູນສຳຫຼວດພົນລະເມືອງ ຕ້ອງໄດ້ປົກປ້ອງຂໍ້ມູນສ່ວນບຸກຄົນ ທີ່ພວກເຮົາເກັບກຳ ແລະ ເກັບຮັກສາໄວ້ຢ່າງປົດລັບ. ສູນສຳຫຼວດພົນລະເມືອງ ສາມາດນຳໃຊ້ຄຳຕອບຂອງເຈົ້າ ເພື່ອຜະລິດຂໍ້ມູນສະຖິຕິເທົ່ານັ້ນ. ໃນຕົວ ຈິງ, ພະນັກງານຂອງສູນສຳຫຼວດພົນລະເມືອງທຸກຄົນ ໄດ້ໃຫ້ຄຳປະຕິຍານວ່າຈະປົກປ້ອງຂໍ້ມູນສ່ວນບຸກຄົນຕະຫຼອດຊີວິດຂອງພວກເຂົາ. ຄຳຕອບຂອງເຈົ້າ ບໍ່ສາມາດນຳໃຊ້ເພື່ອຈຸດປະສົງການບັງຄັບໃຊ້ກົດໝາຍ ຫຼື ການກຳນົດຄວາມເໝາະສົມຂອງເຈົ້າ ໃນການໄດ້ຮັບຜົນປະໂຫຍດຈາກລັດຖະບານ.

## ອີງໃສ່ກົດໝາຍ, ຄຳຕອບຂອງເຈົ້າ ບໍ່ສາມາດນຳໃຊ້ເພື່ອຕໍ່ຕ້ານເຈົ້າໄດ້.

ອີງໃສ່ກົດໝາຍ,  ອົງກອນລັດ ຫຼື ສານ ບໍ່ສາມາດນຳໃຊ້ຄຳຕອບຂອງເຈົ້າເພື່ອຕໍ່ຕ້ານເຈົ້າໄດ້— ບໍ່ວ່າຈະເປັນສູນສືບສວນກາງແຫ່ງຊາດ (FBI), ສຳນັກຂ່າວກອງກາງ (CIA), ກົມຮັກສາຄວາມປອດໄພພາຍໃນຊາດ (DHS), ແລະ ອົງກອນຄົນເຂົ້າເມືອງ ແລະ ພາສີ ຂອງສະຫະລັດອາເມລິກາ (ICE). ກົດໝາຍ ຮຽກຮ້ອງໃຫ້ສູນສຳຫຼວດພົນລະເມືອງ ຮັກສາຂໍ້ມູນຂອງເຈົ້າເປັນຄວາມລັບ ແລະ ນຳໃຊ້ຄຳຕອບຂອງເຈົ້າສຳລັບຜະລິດຂໍ້ມູນສະຖິຕິເທົ່ານັ້ນ.



### ກົດໝາຍໄດ້ເວົ້າຢ່າງຈະແຈ້ງ—ບໍ່ສາມາດເຜີຍແຜ່ຂໍ້ມູນສ່ວນຕົວ.

ພາຍໃຕ້ຫົວຂໍ້ 13 ຂອງກົດຂອງ ສະຫະລັດອາເມລິກາ, ສູນສະຖິ ບໍ່ສາມາດ ເຜີຍແຜ່ຂໍ້ມູນໃດໆທີ່ຈະສາມາດບົ່ງ ຊີ້ໄດ້ ເຖິງບຸກຄົນ, ຄົວເຮືອນ, ຫຼື ທຸລະກິດ, ລວມທັງ ອົງກອນທາງກົດໝາຍ.

ກົດໝາຍ ໄດ້ກ່າວວ່າຂໍ້ມູນທີ່ເກັບ ກຳມາໄດ້ ແມ່ນສາມາດນຳໃຊ້ສຳລັບ ຈຸດປະສົງທາງດ້ານສະຖິຕິເທົ່ານັ້ນ ແລະ ບໍ່ແມ່ນສຳລັບຈຸດປະສົງອື່ນໆ.

ເພື່ອສະໜັບສະໜູນການຄົ້ນຄວ້າໃນໄລ ຍະຜ່ານມາ, ຫົວຂໍ້ 44 ຂອງກົດຂອງ ສະຫະລັດອາເມລິກາ ອະນຸຍາດໃຫ້ ສູນຂ່າວສານແຫ່ງຊາດ ແລະ ບັນທຶກຂໍ້ມູນ (National Archives and Records Administration) ເຜີຍແຜ່ຂໍ້ມູນຈາກການສຳຫຼວດພົນລະ ເມືອງ ໄດ້ພາຍຫຼັງ 72 ປີ ເທົ່ານັ້ນ.

ພະນັກງານສູນສຳຫຼວດພົນລະເມືອງ ໄດ້ໃຫ້ສັດປະຕິຍານຕະຫຼອດຊີວິດ ວ່າຈະປົກປ້ອງຂໍ້ມູນສ່ວນຕົວຂອງເຈົ້າ, ແລະ ການລ່ວງລະເມີດຈະຖືກປັບໃໝສູງເຖິງ $250,000 ແລະ/ຫຼື ອາດຖືກຈຳ ຄຸກຕັດອິດສະລະພາບຮອດ 5 ປີ.

United States Census 2020

## ບໍ່ມີການຍົກເວັ້ນ.

ກົດໝາຍ ຮຽກຮ້ອງໃຫ້ສູນສຳຫຼວດພົນລະເມືອງ ຮັກສາຂໍ້ມູນຂອງທຸກຄົນເປັນຄວາມລັບ. ອີງຕາມກົດໝາຍ, ບໍ່ມີອົງການໃດ ຫຼື ສານ ທີ່ຈະສາມາດນຳໃຊ້ຂໍ້ມູນຂອງເຈົ້າເພື່ອຕໍ່ຕ້ານເຈົ້າ. ສູນສຳຫຼວດພົນລະເມືອງ ຈະບໍ່ແລກປ່ຽນຄຳຕອບຂອງບຸກຄົນ ໃຫ້ແກ່ອົງກອນກວດຄົນເຂົ້າເມືອງ, ອົງກອນບັງຄັບໃຊ້ກົດໝາຍຕ່າງໆ, ຫຼື ອະນຸຍາດໃຫ້ນຳໃຊ້ຂໍ້ມູນເພື່ອກຳນົດຄວາມເໝາະສົມສຳລັບການໄດ້ຮັບຜົນປະໂຫຍດຈາກລັດຖະບານ. ຫົວຂໍ້ທີ 13 ສະແດງໃຫ້ເຫັນຈະແຈ້ງວ່າ ຂໍ້ມູນທີ່ເກັບກຳມາໄດ້ ແມ່ນສຳລັບຈຸດປະສົງທາງດ້ານສະຖິຕິເທົ່ານັ້ນ—ພວກເຮົາບໍ່ອະນຸຍາດໃຫ້ນຳໃຊ້ສຳລັບເຫດຜົນອື່ນໆ, ລວມທັງ ທາງກົດໝາຍ.

## ເຈົ້າສາມາດເລືອກໄດ້ເອງ: ເຈົ້າສາມາດຕອບຜ່ານທາງອອນລາຍ, ໄປສະນີ ຫຼື ໂທລະສັບ ທີ່ປອດໄພ.

ເຈົ້າມີຫຼາກຫຼາຍທາງເລືອກ ໃນການຕອບຄຳຖາມ ຜ່ານທາງອອນລາຍ, ໄປສະນີ ຫຼື ໂທລະສັບ. ຄົວເຮືອນທີ່ບໍ່ຕອບຜ່ານວິທີການເຫຼົ່ານີ້ ຈະມີນັກເດີນສຳຫຼວດລົງໄປຢ້ຽມຢາມເພື່ອເກັບກຳຂໍ້ມູນ. ບໍ່ວ່າຈະເປັນວິທີທາງໃດທີ່ເຈົ້າໃຊ້ເພື່ອຕອບຄຳຖາມ, ຂໍ້ມູນສ່ວນຕົວຂອງເຈົ້າ ຈະຖືກປົກປ້ອງພາຍໃຕ້ກົດໝາຍ.

## ຄຳຕອບຂອງເຈົ້າທາງອອນລາຍ ຈະປອດໄພຈາກການຖືກລັກຂໍ້ມູນ ແລະ ການຄຸກຄາມທາງໄຊເບີ້.

ສູນສຳຫຼວດພົນລະເມືອງ ມີມາດຕະການທີ່ແໜ້ນໜາ ເພື່ອຮັກສາຄຳຕອບອອນລາຍໃຫ້ປອດໄພ. ທຸກຂໍ້ມູນທີ່ສົ່ງຜ່ານທາງອອນລາຍຈະຖືກໃສ່ລະຫັດເພື່ອປົກປ້ອງຂໍ້ມູນສ່ວນຕົວ. ຫຼັງຈາກໄດ້ຮັບຂໍ້ມູນ, ຄຳຕອບຈະບໍ່ມີຢູ່ອອນລາຍ. ເລີ້ມຕັ້ງແຕ່ເວລາທີ່ສູນສຳຫຼວດພົນລະເມືອງເກັບກຳຄຳຕອບ, ຈຸດສຸມ ແລະ ຄວາມຮັບຜິດຊອບທາງດ້ານກົດໝາຍຂອງພວກເຮົາ ແມ່ນຮັກສາຂໍ້ມູນເຫຼົ່ານັ້ນໃຫ້ປອດໄພ.

## ພວກເຮົາ ມຸ້ງໝັ້ນທີ່ຈະຮັກສາຄວາມລັບ.

ຢູ່ສູນສຳຫຼວດພົນລະເມືອງຂອງສະຫະລັດອາເມລິກາ, ພວກເຮົາມຸ້ງໝັ້ນທີ່ຈະຮັກສາຄຳຕອບຂອງເຈົ້າຢ່າງປິດລັບ. ນີ້ໝາຍຄວາມວ່າ ມີຄວາມປອດໄພທີ່ຈະໃຫ້ຄຳຕອບ ແລະ ຮູ້ວ່າຂໍ້ມູນຈະຖືກນຳໃຊ້ເພື່ອສະແດງໃຫ້ເຫັນຮູບພາບທາງດ້ານສະຖິຕິໂດຍລວມຂອງປະເທດ ແລະ ຊຸມຊົນ.

ຮຽນຮູ້ເພີ່ມຕື່ມ ກ່ຽວກັບ ການປົກປ້ອງ ແລະ ການຮັກສາຄວາມລັບຂອງຂໍ້ມູນຂອງສູນສຳຫຼວດພົນລະເມືອງ ໄດ້ຢູ່ເວັບໄຊ໌ www.census.gov/privacy.



**ກົດໝາຍປົກປ້ອງຂໍ້ມູນສ່ວນຕົວຈາກການສຳຫຼວດພົນລະເມືອງສາມາດຮັບມືກັບສິ່ງທ້າທາຍ.**

ໃນປີ 1982, ສານສູງສຸດຂອງສະຫະລັດອາເມລິການ ຢັ້ງຢືນວ່າ ຂໍ້ແມ້ແຕ່ທີ່ຢູ່ ແມ່ນເປັນຄວາມລັບ ແລະ ບໍ່ສາມາດເປີດເຜີຍໄດ້ ຜ່ານການຊອກຫາຫຼັກຖານທາງກົດໝາຍ ຫຼື ກົດໝາຍສິດເສລີພາບທາງດ້ານຂໍ້ມູນ (FOIA). ໃນປີ 2010, ກົມຍຸດຕິທຳຂອງສະຫະລັດອາເມລິການ ກຳນົດວ່າ ກົດໝາຍຕ້ານການກໍ່ການຮ້າຍ ບໍ່ສາມາດລົບລ້າງກົດໝາຍທີ່ປົກປ້ອງຄວາມລັບຂອງຄຳຕອບຂອງບຸກຄົນ ໃນການສຳຫຼວດພົນລະເມືອງ. ສານບໍ່ສາມາດອອກຄຳສັ່ງສານໂດຍ ອີງໃສ່ຄຳຕອບສຳລັບການສຳຫຼວດພົນລະເມືອງ.

United States® Census 2020

ຕິດຕາມພວກເຮົາ @uscensusbureau